# ໂຮງຮຽນວັນອາທິດ

## ວັນອາທິດ ທີ 7 ມີນາ 2010 (3/7/2010)

---

## ເມື່ອສະມາຊິກຄຣິສຕະຈັກບໍ່ຖືກຕ້ອງປອງດອງກັນ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ໂກຣິນໂທ1:10-15,26-29;3:1-4

**ຜົນສະທ້ອນຕໍ່ຊີວິດ:**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ເຂົ້າໃຈໄດ້ເຖິງຮາກເຫງົ້າຂອງສາຍເຫດຂອງຄວາມແຕກແຍກໃນຄຣິສຕະຈັກ ແລະຊ່ວຍໃນການຕັດສິນໃຈຕໍ່ເຫດການທີ່ເກີດຂຶ້ນ ທ່ານຈະເປັນຜູ້ປ້ອງກັນຫຼືຈະເປັນຜູ້ຍຸດຕິບັນຫາຄວາມແຕກແຍກໃນຄຣິສຕະຈັກຂອງທ່ານ.

**ເປົ້າໝາຍຂອງບົດຮຽນ:**

ບົດຮຽນນີ້ແມ່ນກ່ຽວກັບການແບ່ງແຍກຢູ່ໃນຄຣິສຕະຈັກ.

**ຄວາມສຳຄັນຂອງບົດຮຽນ:**

ບໍ່ມີກຸ່ມຂອງຊຸມຊົນໃດທີ່ຈະມີຄວາມຄິດເຫັນດີເຫັນພ້ອມກັນໃນທຸກໆເຫດການທີ່ເກີດຂຶ້ນນັ້ນຢ່າງເປັນເອກສັນອັນນຶ່ງອັນດຽວກັນ. ໃນບາງກໍຣະນີ, ຄວາມແຕກຕ່າງຂອງຂໍ້ຄິດເຫັນທີ່ເປັນຜົນສະທ້ອນກໍ່ໃຫ້ເກີດຈິດໃຈແຂງກະດ້າງ ແລະການຕິດພັນຢູ່ກັບການເຫັນແກ່ຕົວຫຼາຍເກີນໄປ. ເມື່ອມີບັນຫາຢ່າງນີ້ເກີດຂຶ້ນໃນຄຣິສຕະຈັກ__ເກີດແລ້ວກໍເກີດອີກ___ການຮັບໃຊ້ຂອງຄຣິສຕະຈັກໃນຊຸມຊົນກໍຈະໄດ້ຮັບແຕ່ສິ່ງທີ່ໜ້າອັບອາຍ.

ເມື່ອບໍ່ນານມານີ້ສັງເກດເບິ່ງການຕິດຕໍ່ພົວພັນທີ່ສຳຄັນຂອງຄຣິສຕະຈັກ: ຄວາມເປັນນໍ້ານຶ່ງໃຈດຽວກັນໃນຄຣິສຕະຈັກບັບຕິສ. ຂ້າພຣະເຈົ້າມີຄວາມປລາດໃຈຖ້າຫາກວ່າຄວາມເປັນນໍ້ານຶ່ງໃຈດຽວກັນເປັນອຸປະນິສັຍຕົວຈິງຂອງຄຣິສຕະຈັກນັ້ນ. ຫຼືມີ "ຄວາມເປັນນໍ້ານຶ່ງໃຈດຽວກັນ" ຄວາມນຶກຄິດທີ່ເຂົາພະຍາຍາມບາກບັ່ນຕໍ່ສູ້ເອົາ? ອັນໃດທີ່ເປັນຄວາມໂດດເດັ່ນຂອງຄຣິສຕະຈັກຂອງທ່ານໃນກຸ່ມຊຸມຊົນ? ມັນເປັນທີ່ຍອມຮັບເຖິງຄວາມເປັນນໍ້ານຶ່ງໃຈດຽວກັນຫຼືວ່າມັນເປັນການແບ່ງແຍກ?

ໃນຂນະທີ່ທ່ານກຳລັງສຶກສາບົດຮຽນນີ້ຢູ່, ທ່ານຈະໄດ້ຮຽນຮູ້ກ່ຽວກັບຮາກເຫງົ້າທີ່ພາໃຫ້ເກີດການແຕກແຍກໃນຄຣິສຕະຈັກ. ທ່ານຍັງຈະຖືກຮຽກຮ້ອງໃຫ້ສະແດງຂໍ້ຄິດເຫັນທີ່ຈະນຳມາສະແດງອອກໃຫ້ເຫັນເຖິງການກະທຳຂອງທ່ານວ່າອັນໃດທີ່ເປັນຄວາມສາມາດຂອງທ່ານໃນການປ້ອງກັນການແຕກແຍກໃນຄຣິສຕະ ຫຼືອັນໃດທີ່ເປັນຊັຍຊະນະຕໍ່ຄວາມບໍ່ຖືກຕ້ອງປອງດອງກັນໃນຄຣິສຈັກຕະຂອງທ່ານ.

## ສຶກສາພຣະຄັມພີ

**1. ໃຫ້ຄວາມຈົງຮັກພັກດີຜິດທີ່** 1 ໂກຣິນໂທ 1:10-15

ຄຣິສຕະຈັກທີ່ເມືອງໂກຣິນໂທ ແນ່ນອນທີ່ສຸດບໍ່ສົມຄວນຈະໄດ້ຂຶ້ນຊື່ "ຄຣິສຕະຈັກທີ່ເປັນນໍ້ານຶ່ງໃຈດຽວກັນ"! ໄດ້ປາກົດຂຶ້ນໃນຄຣິສຕະຈັກນີ້ປະມານ ຄ. ສ. 50, ອັຄສາວົກໂປໂລຮູ້ຈັກຄຣິສຕະຈັກນີ້ເປັນຢ່າງດີ. ທ່ານມີຄວາມຮ້ອນຮົນໃນການແກ້ໄຂບັນຫາຂອງການແຕກແຍກຂອງຄຣິສຕະຈັກນີ້. ຖ້າທ່ານຈົດເປັນລາຍລະອຽດຂອງແຕ່ລະບັນຫາຂອງຂໍ້ຂັດແຍ້ງກັນທາງດ້ານແນວຄວາມຄິດໃນຄຣິສຕະຈັກ, ທ່ານອາດຈະເລີ້ມຕົ້ນຕັ້ງແຕ່ສີຂອງພົມ, ດົນຕຣີ, ຫຼື ການຄັດເລືອກຂອງການແປພຣະຄັມພີສຳລັບຫ້ອງຮຽນເຊົ້າວັນອາທິດຫຼື ການນະມັສການ. ບັນຫາທີ່ສຳຄັນທີ່ສຸດທີ່ເມືອງໂກຣິນໂທ, ຍັງຄົງແມ່ນການໃຫ້ຄວາມຈົງຮັກພັກດີຜິດສະຖານທີ່.

ມີພຽງອຸດົມຄະຕິດຽວສັມລັບຄຣິສຕຽນທຸກໆຄົນຄືຄວາມເປັນນໍ້ານຶ່ງໃຈດຽວກັນ. ຊາວເມືອງໂກຣິນໂທຜູ້ທີ່ມີຄວາມເຊື່ອເຫັນວ່າພວກເຂົາຄວນມີຄວາມເປັນອັນນຶ່ງອັນດຽວກັນໃນຄວາມຈົງຮັກພັກດີຂອງພວກເຂົາຕໍ່ອົງພຣະເຢຊູຄຣິດ. ທ່ານໂປໂລບໍ່ໄດ້ຄາດຫວັງໃຫ້ເຂົາເປັນເໝືອນກັນທັງໝົດ, ແຕ່ທ່ານໂປໂລຮູ້ວ່າໃນຄວາມຈົງຮັກພັກດີຂອງພວກເຂົາທີ່ມີຕໍ່ **ອົງພຣະຜູ້ເປັນເຈົ້າພຣະເຢຊູຄຣິສຂອງເຮົາ** ຄວນເປັນທີ່ສຳຄັນອັນດັບນຶ່ງໃນການປັບຕົວກັບໃຈໃຫ້ເຂົ້າເປັນອັນນຶ່ງອັນດຽວກັນໃນພວກເຂົາ. ຄຳເວົ້າ"ຮວມກັນເຂົ້າ" ທີ່ມາຈາກພຣະທັມມາຣະໂກ 1:19 ທີ່ອ້າງເຖິງການຝູງມອງ. ທ່ານໂປໂລມີຄວາມປາຖນາຢ່າແຮງກ້າທີ່ຈະພົບເຫັນການມີຄວາມສຳພັນເຊິ່ງກັນແລະກັນໃນໝູ່ຄຣິສຕຽນຊາວເມືອງໂກຣິນໂທ. ເຂົາຄວນມີສ່ວນຮ່ວມນຳກັນໃນການຮັບຜິດຊອບຕໍ່ການກໍ່ສ້າງພື້ນຖານຂອງຄວາມເຊື່ອຢ່າງແທ້ຈິງຊຶ່ງເປັນທີ່ກຽວຂ້ອງກັບການປັບປຸງແກ້ໄຂບັນຫາທີ່ເກີດຂຶ້ນໃນຄຣິສຕະຈັກ.

ທ່ານໂປໂລ ໃນທຳນອງດຽວກັນຄວາມກົດດັນທີ່ປຽບທຽບໃຫ້ເຫັນເຖິງຄວາມດຸ່ນດ່ຽງກັນລະຫວ່າງຄວາມເປັນນໍ້ານຶ່ງໃຈດຽວກັນແລະຄວາມຄິດເຫັນບໍ່ຕົງກັນໃນຄຣິສຕະຈັກ ເມື່ອທ່ານໄດ້ອະທິບາຍວ່າຄຣິສຕະຈັກແມ່ນພຣະກາຍຂອງພຣະຄຣິດ. ໃນຮ່າງກາຍຂອງມະນຸດກໍມີອະວັຍວະຢູ່ຫຼາຍພາກສ່ວນແລະມີໜ້າທີ່ຂອງແຕ່ລະພາກສ່ວນແຕກຕ່າງກັນ, ແຕ່ລະພາກສ່ວນກໍທຳໜ້າທີ່ຮ່ວມກັນເພື່ອຄວາມສົມບູນຂອງຮ່າງກາຍ (ໂກຣິນໂທ 12:12-31). ຄວາມສາມາດໃນການເຂົ້າໃຈຂອງທ່ານໂປໂລເຖິງຄວາມເປັນອັນນຶ່ງອັນດຽວກັນ ແລະຄວາມແຕກແຍກມັນເຮັດໃຫ້ຂ້າພະເຈົ້າຄິດເຫັນປ້າຍທີ່ຕິດຢູ່ປະຕູຫ້ອງການຂອງສິດຍາພິບານຄົນກ່ອນທີ່ວ່າ: ພວກເຮົາສາມາດເປັນອ້າຍເປັນນ້ອງກັນໂດຍບໍ່ຈຳເປັນທີ່ເຮົາຕ້ອງເປັນຄູ່ແຝດ.

ມີຜູ້ນຶ່ງທີ່ມາຈາກນາງຂະໂລເອເປັນຜູ້ເລົ່າເຣື່ອງການແຕກແຍກກັນທີ່ເມືອງໂກຣິນໂທໃຫ້ກັບທ່ານໂປໂລ. ສາຍເຫດທີ່ກໍ່ໃຫ້ເກີດການຜິດຖຽງກັນກໍເນື່ອງມາຈາກການມີຄຣິສຕຽນບາງກຸ່ມໃຫ້ຄວາມຈົງຮັກພັກດີກັບມະນຸດທີ່ເປັນຜູ້ນຳແທນທີ່ຈະມອບຄວາມຈົງຮັກພັກດີໄວ້ໃນອົງພຣະຄຣິດ. ມີສີ່ບັນຫາທີ່ເກີດຂຶ້ນກັບຊາວໂກຣິນໂທ. ກຸ່ມທີນຶ່ງຕິດຕາມໂປໂລ. ກຸ່ມທີສອງແຍກຕົວໄປກັບອາໂປໂລ. ຄົນນີ້ເປັນຜູ້ປະກາດພຣະທັມທີ່ເມືອງເອເຟໂຊ (ກິຈການ18:24-19:1); ລາວເປັນຜູ້ທີ່ມີໂວຫານແລະຊຳນານໃນເຣື່ອງຂອງພຣະຄັມພີຫຼາຍ. ກຸ່ມທີສາມ ໄດ້ຕິດຕາມເກຟາ(ຊີໂມນ ເປໂຕ). ກຸ່ມທີສີ່ໄດ້ພິຈາຣະນາຕົວເອງໂດຍສະເພາະທາງດ້ານຄວາມເຊື່ອ, ຕິດຕາມພຣະຄຣິດ___ແຕ່ວ່າພວກເຂົາມີຄວາມຈົ່ງຮັກພັກ ດີຕໍ່ພຣະຄຣິດແບບມີການແບ່ງແຍກຫຼາຍກວ່າການຮວມເຂົ້າເປັນອັນນຶ່ງອັນດຽວກັນ.

ອີກເທື່ອນຶ່ງທ່ານໂປໂລ ອ້າງເຫດຜົນຂອງການໃຫ້ຄວາມຈົງຮັກພັກດີຕໍ່ຜູ້ນຳທີ່ເປັນມະນຸດທັມມະດາໂດຍຖ້ອຍຄຳທີ່ໜັກແໜ້ນວ່າບໍ່ມີມະນຸດຄົນໃດທີ່ສາມາດໃຫ້ຄວາມລອດພົ້ນໄດ້. ໂປໂລບໍ່ໄດ້ຕາຍເພື່ອໄຖ່ຄວາມບາບຂອງເຂົາ; ເຂົາບໍ່ໄດ້ຮັບບັບຕິສມາໃນນາມຊື່ຂອງໂປໂລ. ທ່ານໂປໂລຍັງໄດ້ອ້າງເຖິງຊື່ແລະຈຳນວນຂອງບຸກຄົນທີ່ເພິ່ນໄດ້ທຳພິທີຮັບບັບຕິສະມາໃຫ້!

ການເວົ້າເຖິງຄວາມແຕກແຍກທີ່ເມືອງໂກຣິນໂທຂອງທ່ານໂປໂລ ບໍ່ໄດ້ໝາຍຄວາມວ່າທ່ານປະຕິເສດສິດອຳນາດໃນການນຳພາຂອງບັນດາຜູ້ນຳ. ທ່ານໝາຍຄວາມວ່າຄວາມຈົງຮັກພັກດີທີ່ສຸດຕໍ່ພຣະເຢຊູຄຣິດຈະຖືກລະຖິ້ມຢ່າງຊາວໂກຣິນໂທແລ້ວຫັນໄປອຸທິດຕົນໃຫ້ກັບບັນດາຜູ້ນຳເຊັ່ນອາໂປໂລແລະຊີໂມນເປໂຕ. ຄວາມເປັນອັນນຶ່ງອັນດຽວກັນຂອງຄຣິສຕະຈັກແມ່ນສ້າງສະມາຊິກໃຫ້ມີຄວາມເຂົ້າໃຈວ່າພຣະເຢຊູຄຣິດແມ່ນອົງພຣະຜູ້ໂຜດໃຫ້ພົ້ນຂອງພວກເຮົາ. ແຕ່ກ່ອນອື່ນຄຣິສຕະຈັກຕ້ອງເຫັນພ້ອມກັບຂໍ້ຄຳສັ່ງອັນໃຫ່ຍ, ສິດແລະອຳນາດທັງໝົດເປັນຂອງພຣະຄຣິດ,ບັນຫາຕ່າງໆແມ່ນບໍ່ຍາກທີ່ເຮົາຈະແກ້ໄຂ.

## 2. <u>ຄວາມທະນົງຕົວຂອງມະນຸດ</u> 1 ໂກຣິນໂທ 1: 26- 29

ການແຕກແຍກອັນທີສອງຂອງເມືອງໂກຣິນໂທ ກໍຄືຄວາມທະນົງຕົວຫຼືຄວາມຈອງຫອງຂອງສະມາຊິກຈຳນວນນຶ່ງ. ຫຼາຍຄຣິສຕະຈັກໃນທຸກມື້ນີ້ກໍຄ້າຍຄືກັນ, ຄຣິສຕະຈັກເມືອງໂກຣິນໂທສະມາຊິກຢູ່ທີ່ນັ້ນມີຫຼາຍໆຄົນທີ່ມີເບື້ອງຫຼັງແຕກ

ຕ່າງກັນ. ບາງພວກກໍໄດ້ວາງຕົວຢູ່ເໜືອຄົນອື່ນ. ບາງຄົນມີເງິນຫຼາຍ, ບາງຄົນມີຖານະສູງກວ່າໝູ່ໃນສັງຄົມ, ຫຼືວ່າປະສົບຄວາມສຳເຣັດຫຼາຍກ່ວາຄົນອື່ນໆ. ທ່ານໂປໂລໄດ້ກ່າວເຖິງບັນຫາຂອງການທະນົງຕົວຂອງມະນຸດໂດຍໄດ້ເນັ້ນວ່າຄຣິສຕຽນທຸກຄົນໄດ້ມາຮູ້ຈັກພຣະເຈົ້າໃນວິທີດຽວກັນ.

ທ່ານໂປໂລໄດ້ມີຄວາມເປັນຫ່ວງນຳຄຣິສຕະຈັກໃນເມືອງໂກຣິນໂທທີ່ໄດ້ຫັນໄປຕີຣາຄາຄົນອື່ນຈາກການເບິ່ງກັນແຕ່ພາຍນອກເທົ່ານັ້ນ. ໃນຫຼາຍສັດຕະວັດກ່ອນນັ້ນພຣະເຈົ້າໄດ້ບອກກັບຊາມູເອນບໍ່ໃຫ້ພິພາກສາກັນ. ມະນຸດພິພາກສາກັນໂດຍປາກົດການພາຍນອກ, ແຕ່ວ່າພຣະເຈົ້າຕັດສິນໂດຍເບິ່ງທາງພາຍໃນຈິດໃຈ(1 ຊາມູເອນ 16 : 7 ). ໃນຄຣິສຕະຈັກທຸກມື້ນີ້, ບາງຄົນກໍຍັງຕີຣາຄາກັນດ້ວຍຊັບສິ່ງຂອງ, ລະດັບການສຶກສາ, ຖານະການເງິນ, ຫຼືປາກົດການທາງເນື້ອໜັງ. ມາດຕະຖານຂອງມະນຸດໄດ້ນຳໄປສູ່ບັນຫາຂອງການທະນົງຕົວຢູ່ສເມີ. ອີງຕາມມາຕະຖານຂອງພຣະເຈົ້າແລ້ວ, ທ່ານໂປໂລໄດ້ເນັ້ນວ່າຫຼາຍຄົນໃນເມືອງໂກຣິນໂທນັ້ນຍັງບໍ່ມີຄວາມສລາດ, ຍັງບໍ່ມີອຳນາດສູງສຸດຫຼືວ່າຍັງບໍ່ແມ່ນເຈົ້າຊຸນມຸນນາຍ ຕາມມາດຕະຖານຂອງຣະເຈົ້າ.

ຄວາມເປັນນ້ຳນຶ່ງໃຈດຽວກັນທີ່ເໝາະທີ່ສຸດໃນເມືອງໂກຣິນໂທຄວນວາງຢູ່ບົນພື້ນຖານຂອງການຈົດຈຳເຖິງພຣະຄຸນຂອງພຣະເຈົ້າທີ່ພຣະເຈົ້າໄດ້ຊົງປະທານໃຫ້ພົ້ນໄດ້ໂດຍຜ່ານທາງພຣະເຢຊູຄຣິດ. ພຣະເຈົ້າໄດ້ພິກປີ້ນມາດຕະຖານອັນຍິ່ງໃຫຍ່ຂອງໂລກນີ້ລົງເມື່ອພຣະອົງຊົງເລືອກສິ່ງທີ່ມະນຸດຖືວ່າໂງ່ແລະມະນຸດຖືວ່າອ່ອນກຳລັງ. ເພື່ອໃຫ້ພຣະປະສົງຂອງພຣະອົງສຳເຣັດ. ຖ້າຫາກວ່າພຣະເຈົ້າປະທານຄວາມພົ້ນໃຫ້ແຕ່ຜູ້ຮັ່ງມີ, ຜູ້ມີອຳນາດ, ຜູ້ເປັນເຈົ້າຊຸນມຸນນາຍເທົ່ານັ້ນ ພວກເຂົາກໍບໍ່ອາດຈະສາມາດສຳນຶກໄດ້ວ່າຄວາມພົ້ນນັ້ນແມ່ນຂອງພຣະຣາຊທານທີ່ມາຈາກພຣະເຈົ້າ, ຊຶ່ງບໍ່ແມ່ນຄວາມສຳເຣັດຂອງມະນຸດ.

ຄຣິສຕະຈັກໃນສມັຍທຸກມື້ນີ້ໂອ້ອວດກ່ຽວກັບຫຼາຍໆຢ່າງ. ບາງຄຣິສຕະຈັກອາດຈະຮູ້ສຶກວ່າຄຣິສຕະຈັກເຂົາພິເສດກວ່າຄຣິສຕະຈັກອື່ນຖ້າວ່າເຮົາມີອາຄານຫຼັງໃຫຍ່. ມີງົບປະມານຫຼາຍກວ່າ, ມີກຸ່ມນັກຮ້ອງທີ່ມີຄວາມນິຍົມຫຼາຍກວ່າມີແບບສອນທີມທີ່ດີກວ່າ.ຖ້າຫາງຄຣິສຕະຈັກສຳນຶກວ່າຄຣິສຕະຈັກເປັນໜີ້ຂອງການຊົງພຣະຊົນຂອງພຣະເຈົ້າຢູ່ ມັນກໍບໍ່ເປັນການອວດໂຕໃນສາຍພຣະເນດຂອງພຣະເຈົ້າ.

ຄຣິສຕະຈັກທີ່ເກັ່ງໃນດ້ານວຽກງານສາສນາທູດ, ການປ່າວປະກາດ, ການສຶກສາພຣະຄັມພີ, ແລະການງານດ້ານອື່ນໆທີ່ຍົກຍ່ອງພຣະເຈົ້າແລ້ວມັນກໍສາມາດເປັນການຖວາຍກຽດແດ່ພຣະເຈົ້າຊຶ່ງກໍດີກວ່າທີ່ຈະຍົກຍ້ອງຄວາມສຳເຣັດຂອງມະນຸດ. ທ່ານໂປໂລໄດ້ສລຸບໜັງສືຂອງເພິ່ນໃນພາກນີ້ໂດຍອ້າງເຖິງພຣະຄັມພີ ເຢຣມີຢາ 9:24 ບ່ອນທີ່ຜູ້ທຳນວາຍໄດ້ໜູນໃຈໃນການໂອ້ອວດກ່ຽວກັບການພົວພັນຂອງພວກເຮົາກັບພຣະເຈົ້າ.(1ໂກຣິນໂທ 1:31)

## 3. <u>ຈິດວິນຍານທີ່ບໍ່ເຕີບໃຫຍ່</u> 1 ໂກຣິນໂທ 3:1- 4

ຄຣິສຕຽນເມືອງໂກຣິນໂທຍັງເປັນເໜືອນເດັກນ້ອຍຢູ່. ທ່ານໂປໂລຕ້ອງການໃຫ້ຜູ້ທີ່ດຳລົງຊີວິດຢູ່ໃນຄວາມເຊື່ອທີ່ເມືອງໂກຣິນໂທໃຫ້ຈະເຣີນເຕີບໂຕຂຶ້ນຝ່າຍຈິດວິນຍານ. ທີ່ແທ້, ທ່ານເຂົ້າໃຈການຂາດຄວາມສາມັກຄີຂອງພວກເຂົາແມ່ນມີຜົນສະທ້ອນຕໍ່ການຈະເຣີນເຕີບໂຕຝ່າຍຈິດວິນຍານຂອງເຂົາ. ການປະຕິບັດຂອງເຂົາເປັນເໝືອນເດັກນ້ອຍໃນພຣະຄຣິດ. ຈິງຢູ່ພວກເຮົາທຸກຄົນກໍເຄີຍເປັນເດັກນ້ອຍໃນພຣະຄຣິດ. ເປັນຄວາມເໝາະສົມທີ່ສຸດ ຖ້າຄວາມເຊື່ອຂອງເຮົາຫາກເຕີບໂຕຂຶ້ນໃນແຕ່ລະປີ. ທ່ານໂປໂລໄດ້ຮູ້ຈັກຄຣິສຕຽນເມືອງໂກຣິນໂທເປັນເວລານານພໍສົມຄວນທ່ານຫວັງວ່າເຂົາຈະເປັນຄຣິສຕຽນທີ່ເຕີບໃຫຍ່.

ອາຫານບໍ່ຄືເກົ່າເມື່ອເຮົາເຕີບໃຫຍ່. ເດັກນ້ອຍທີ່ເກີດໃໝ່ນັ້ນອາຫານຂອງເຂົາກໍຄືນ້ຳນົມ ຫຼັງຈາກນັ້ນກໍກ້າວເຂົ້າສູ່ອາຫານແຂງ. ທ່ານໂປໂລໄດ້ເລີ້ມຕົ້ນໃຫ້ອາຫານທີ່ເປັນນົມໃຫ້ກັບຊາວເມືອງໂກຣິນໂທໃນເວລາເລີ້ມຕົ້ນ. ເວລາເຂົາເປັນຄຣິສຕຽນໃໝ່ທ່ານໂປໂລໄດ້ສິດສອນເຂົາເຖິງພື້ນຖານຂອງຄວາມເຊື່ອແລະການປະພຶດປະຕິບັດຂອງຄຣິສຕຽນ. ເປັນເວລາອັນເໝາະສົມແລ້ວ, ທ່ານໂປໂລໄດ້ກະຕຽມເອົາອາຫານແຂງໃຫ້ເຂົາ, ແຕ່ແລ້ວເຂົາກໍບໍ່ຕຽມພ້ອມທີ່ຈະຮັບ!

ທ່ານໂປໂລໄດ້ບອກເຂົາວ່າເຂົາທັງຫຼາຍຍັງຢູ່ຝ່າຍມະນຸດທັມມະດາ.  ຄຳວ່າເນື້ອກາຍທ່ານໂປໂລບໍ່ໄດ້ໝາຍເຖິງພາກສວນໃດພາກສວນນຶ່ງຂອງຮ່າງກາຍບໍ່ໄດ້ທຳງານຢ່າງເຕັມເມັດເຕັມໜ່ວຍ. ແຕ່ຄຳວ່າ"ເນື້ອກາຍ" ທ່ານໂປໂລໄດ້ໝາຍເຖິງການບໍ່ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ, ຣວມທັງແນວຄວາມຄິດ, ທ່າທີແລະການປະຕິບັດ. ຕົວຢ່າງການງານຂອງມະນຸດທັມມະດາ(ຄາລະເຕັຽ 5:19- 21)ຄຣິສຕຽນເມືອງໂກຣິນໂທເປັນມະນຸດທັມມະດາເພາະວ່າເຂົາບໍ່ໄດ້ດຳລົງຊີວິດຕາມນ້ຳພຣະທັຍຂອງພຣະເຈົ້າເຂົາເປັນຄຣິສຕຽນທີ່ບໍ່ເຕີບໃຫຍ່.

ຄຣິສຕະຈັກຈະເປັນອັນນຶ່ງອັນດຽວກັນໄດ້ຕໍ່ເມື່ອວ່າຄຣິສຕະຈັກນັ້ນມີພຣະຄຣິດເປັນຈຸດໃຈກາງ, ບໍ່ແມ່ນການນຳພາຂອງມະນຸດ.

ໃນເມື່ອຄຣິສຕຽນເມືອງໂກຣິນໂທໄດ້ພາກັນເນັ້ນໜັກແລະຈົງຮັກພັກດີຕໍ່ການນຳພາຂອງມະນຸດຄື:ທ່ານໂປໂລແລະອາໂປໂລ, ແລະການກະທຳດັ່ງກ່າວກໍເປັນການກະທຳຂອງມະນຸດທັມມະດາ ບໍ່ແມ່ນການກະທຳຂອງຄຣິສຕຽນທີ່ເຕີບໃຫຍ່.

ຈິດວິນຍານທີ່ເຕີບໃຫຍ່ນັ້ນສາມາດວັດແທກໄດ້ຫຼາຍວິທີທາງດ້ວຍກັນ. ລາວຈະເປັນຜູ້ມັກອ່ານແລະສຶກສາພຣະຄຳຂອງພຣະເຈົ້າ, ການສຶກສາພຣະຄຳນັ້ນຈະເຮັດໃຫ້ເຮົາເຫັນວ່າມີເຫດການອັນໃໝ່ໆໄດ້ເກີດຂຶ້ນ, ຈະຮູ້ເຖິງບຸກຄລິກລັກສະນະຂອງແຕ່ລະຄົນ, ແລະເນື້ອໃນໃຈຄວາມຂອງພຣະຄັມພີ. ນອກນັ້ນລາວຍັງເປັນຄຣິສຕຽນທີ່ອະທິຖານຢ່າງສມ່ຳສເມີ,  ຮ່ວມນະມັສການບໍ່ຂາດ, ເປັນຜູ້ຮັບໃຊ້ແລະປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິດ.

## <u>ບົດຮຽນແຫ່ງຊີວິດ:</u>

ທຸກມື້ນີ້ລັກສະນະຂອງການບໍ່ເປັນອັນນຶ່ງອັນດຽວກັນໄດ້ເກີດຂຶ້ນຢູ່ໃນຄຣິສຕະຈັກຫຼາຍແຫ່ງ. ຈົດໝາຍຂອງທ່ານໂປໂລຊຶ່ງເພິ່ນໄດ້ຂຽນໄປເຖິງຄຣິສຕຽນເມືອງໂກຣິນໂທໄດ້ຊີ້ບອກວ່າມີຫຼາຍສາຍເຫດທີ່ເຮັດໃຫ້ຄຣິສຕະຈັກບໍ່ເປັນອັນນຶ່ງອັນດຽວກັນ. ມີຄວາມຈົງຮັກພັກດີຕໍ່ການນຳພາຂອງມະນຸດເໜືອກວ່າການຈົງຮັກພັກດີຕໍ່ພຣະເຈົ້າ.   ຄຣິສຕະຈັກຈະເປັນອັນນຶ່ງອັນດຽວກັນໄດ້ກໍຕໍ່ເມື່ອຄຣິສຕະຈັກນັ້ນມີພຣະຄຣິດເປັນຈຸດໃຈກາງ, ບໍ່ແມ່ນການນຳຂອງມະນຸດ.

ທ່ານໄດ້ຮຽນຫຍັງແດ່ກ່ຽວກັບການເປັນອັນນຶ່ງອັນດຽວກັນຢູ່ໃນຄຣິສຕະຈັກຂອງທ່ານຈາກຄຳແນະນຳຂອງທ່ານໂປໂລ?

- ❖ ພິຈາຣະນາເບິ່ງຕົວທ່ານເອງ, ຄວາມຈົງຮັກພັກດີຂອງທ່ານທີມີຕໍ່ສິດຍາພິບານ, ຄຣູສອນໂຮງຮຽນວັນອາທິດ,   ຫຼືເຖົ້າແກ່ໃນຄຣິສຕະຈັກນັ້ນມີລື່ນກວ່າພຣະຄຣິດບໍ່?
- ❖ ແມ່ນບັນຫາອັນໃດທີ່ທ່ານກຳລັງປະເຊີນຢູ່ໃນຄຣິສຕະຈັກຂອງທ່ານ? ທ່ານໄດ້ໂຕ້ຖຽງກັນກ່ຽວກັບບັນຫາເລັກໆນ້ອຍໆບໍ່? ທ່ານເປັນຝ່າຍຖືກຕ້ອງຢູ່ສເມີບໍ່? ທ່ານພ້ອມທີ່ຈະຍອມອ່ອນຂໍ້ຕໍ່ກັນເມື່ອມີບັນຫາບໍ່?
- ❖ ຈົ່ງລະວັງໃນການອວດອ້າງ, ມີຄວາມຍິນດີແລະຄວາມເພິ່ງພໍໃຈຕໍ່ຄວາມສຳເຣັດຜົນນັ້ນກໍດີຢູ່, ແຕ່ວ່າທ່າທີຂອງການອວດອ້າງມັກຈະນຳໄປເຖິງການສູ້ຣົບກັນໃນຄຣິສຕະຈັກ.
- ❖ ການປຽບທຽບຄຣິສຕະຈັກນັ້ນເປັນອັນຕຣາຍ, ແຕ່ຄຣິສຕະຈັກຈະມີພະລັງເຂັ້ມແຂງໃນຈຸດໃດຈຸດນຶ່ງ, ຈະເປັນການປ່າວປະກາດຫຼືໄດ້ຮັບມອບໝາຍໜ້າທີ່ໃດໜ້າທີ່ນຶ່ງ, ແຕ່ບາງຄຣິສຕະຈັກຊ້ຳພັດອວດອ້າງອາຄານຂອງຕົນ.
- ❖ ພິຈາຣະນາເບິ່ງຕົວທ່ານເອງວ່າຊີວິດຝ່າຍວິນຍານຂອງທ່ານນັ້ນມີຄວາມເຕີບໃຫຍ່ຫຼືບໍ່?  ການອ່ານແລະສຶກສາພຣະຄຳຂອງພຣະເຈົ້າມີຄວາມຕ້ອງການໆປັບປຸງຫຼືບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ  www.lsbf.org ໂດຍ LLBC.**